ສະມາຄົມອະດີດ ນັກສຶກສາລາວ ຈາກຍີ່ປຸ່ນ
JAOL Japan Alumni Of Laos
ラオス元日本留学生会

# ປະກາດຮັບສະໝັກນັກສຶກສາທຶນ MEXT-ASJA ສົກປີ 2018

❖ **MEXT-ASJA:**

ເປັນທຶນການສຶກສາຂອງກະຊວງສຶກສາທິການຍີ່ປຸ່ນ (MEXT) ແຕ່ມອບໃຫ້ Asia Japan Alumni ASJA International ເພື່ອມອບສະເພາະໃຫ້ກັບບັນດາປະເທດສະມາຊິກຂອງ ASEAN Council of Japan Alumni (ASCOJA) . ຈຸດປະສົງຂອງການໃຫ້ທຶນ MEXT-ASJA ແມ່ນເພື່ອໃຫ້ນັກສຶກສາທີ່ໄດ້ຮັບທຶນນີ້ ໄດ້ຮຽນຮູ້ພາສາ ແລະ ວັດທະນະທຳຍີ່ປຸ່ນ ພ້ອມກັບທັກສະຕ່າງໆໃນການເປັນຜູ້ນຳ ເພື່ອເມື່ອໄດ້ກັບໄປປະເທດຕົນເອງ ຈະມີຄວາມສາມາດເປັນຜູ້ນຳ ແລະ ພັດທະນາປະເທດຂອງຕົວໃຫ້ໄດ້.

ອ່ານຂໍ້ມູນເພີ່ມເຕີມກ່ຽວກັບທຶນ MEXT-ASJA ໄດ້ທີ່ http://www.jaol.org/scholarship/

❖ **ເງື່ອນໄຂຜູ້ສະໝັກ:**

1. ມີເງື່ອນໄຂສະໝັກທຶນ MEXT ທົ່ວໄປ ຕາມສະຖານທູດຍີ່ປຸ່ນປະຈຳ ສປປ ລາວ ວາງອອກຕາມລີ້ງລຸ່ມນີ້: http://www.la.emb-japan.go.jp/culture_and_education/japanese_government_mext_scholarship.html
2. ບຸກຄົນທົ່ວໄປກໍສາມາດສະໝັກໄດ້, ຖ້າເປັນສະມາຊິກ ສອລຍ ຈະພິຈາລະນາເປັນພິເສດ
3. ຜູ້ສະໝັກຕ້ອງໄດ້ເລືອກຮຽນຢູ່ໂຮງຮຽນທີ່ຢູ່ໃນ ເຂດໂຕກຽວ ຫຼື ໃກ້ໆ ເຂດໂຕກຽວ
4. ສຳລັບຜູ້ທີ່ສະໝັກທຶນຄົ້ນຄວ້າ, ຜູ້ສະໝັກຕ້ອງຍິນດີເຂົ້າຮຽນພາສາຍີ່ປຸ່ນເບື້ອງຕົ້ນ ເປັນເວລາ 6 ເດືອນ ຢູ່ທີ່ TOKYO JAPANESE LANGUAGE EDUCATION CENTER ຕາມທີ່ ASJA ໄດ້ກຳນົດໄວ້
5. ລະຫວ່າງການໄດ້ຮັບທຶນ ຜູ້ສະໝັກຕ້ອງມັກ, ໃຫ້ການຮ່ວມມື ແລະ ເຂົ້າຮ່ວມທຸກກິດຈະກຳ ທີ່ ASJA ຈັດໃຫ້
6. ຜູ້ທີ່ສາມາດອ່ານ, ຂຽນ ແລະ ສົນທະນາເປັນພາສາຍີ່ປຸ່ນໄດ້ ຈະໄດ້ຮັບການພິຈາລະນາເປັນພິເສດ
7. ກໍລະນີໄດ້ຮັບທຶນແລ້ວ ຫຼັງຈາກຮຽນຈົບກັບມາ ຈະຕ້ອງປະກອບສ່ວນເຂົ້າໃນວຽກງານຂອງ JAOL, ເສີມສ້າງສາຍພົວພັນມິດຕະພາບ ລາວ-ຍີ່ປຸ່ນ ຕາມຈຸດປະສົງຂອງທຶນ MEXT-ASJA

**ສະມາຄົມອະດີດນັກສຶກສາລາວຈາກຍີ່ປຸ່ນ**
ກະຊວງສຶກສາທິການ ແລະ ກິລາ ຕຶກເຂດສະໜາມກິລາເຈົ້າອານຸວົງ ສູນປະກັນຄຸນະພາບ ຫ້ອງ 106
ເບີໂທ: 0305746744; ອີເມລ: info@jaol.org; ເວັບໄຊ: www.jaol.org

## ❖ ຕາຕະລາງຮັບຟອມ ແລະ ວັນເວລາສອບເສັງ :

| ທຶນການສຶກສາ | ມື້ຮັບຟອມ (JAOL) | ມື້ສຳພາດ (JAOL) | ມື້ຮັບຟອມ (ສະຖານທູດ) | ມື້ສອບເສັງ (ສະຖານທູດ) | ມື້ສຳພາດ (ສະຖານທູດ) |
|---|---|---|---|---|---|
| ປະລິນຍາເອກ | - | - | 9 ມິຖຸນາ 2017 (ສຸກ) | 17 ມິຖຸນາ 2017 (ເສົາ) | 24 ມິຖຸນາ 2017 (ເສົາ) |
| ປະລິນຍາໂທ | 31 ພຶດສະພາ 2017(ພຸດ) | 3 ມິຖຸນາ 2017(ເສົາ) | | | |
| ປະລິນຍາຕີ | | | 30 ມິຖຸນາ 2017 (ສຸກ) | 15-16 ກໍລະກົດ 2017 (ເສົາ-ທິດ) | 29 ກໍລະກົດ 2017 (ເສົາ) |
| ຊັ້ນສູງທົ່ວໄປ | - | - | | | |
| ຊັ້ນສູງດ້ານເທັກໂນໂລຢີ | - | - | | | |

## ❖ ເອກະສານຄັດຕິດ:

1. ດາວໂຫຼດ ແລະ ປະກອບເອກະສານ ຕາມລີ້ງ http://www.la.emb-japan.go.jp/itpr_en/00_000112.html
2. ດາວໂຫຼດ ແລະ ປະກອບໃບສະໝັກຂອງ JAOL ຕາມລີ້ງ :
   - ສຳລັບປະລິນຍາໂທ

   http://www.jaol.org/wp-content/uploads/2017/05/Application-form-MEXT-ASJA-2018-Research.pdf
   - ສຳລັບປະລິນຍາຕີ

   http://www.jaol.org/wp-content/uploads/2017/05/Application-form-MEXT-ASJA-2018-Undergraduate.pdf

3. ຂຽນຈົດໝາຍສະແດງເຈດຈຳນົງຂອງຕົນເອງໂດຍຕອບຄຳຖາມທີ່ວ່າ "ເປັນຫຍັງ ຂ້າພະເຈົ້າ ຈິ່ງເໝາະສົມກັບການໄດ້ຮັບທຶນ MEXT-ASJA" ຈຳນວນ 1 ສະບັບ ໂດຍບໍ່ໃຫ້ກາຍ 1 ໜ້າ ເປັນພາສາລາວ
4. ສຳເນົາໃບຄະແນນຜົນການຮຽນຂັ້ນຫຼ້າສຸດ
5. ສຳເນົາເອກະສານຮັບຮອງຄວາມສາມາດທາງພາສາຍີ່ປຸ່ນ (ຖ້າມີ)
6. ສຳເນົາເອກະສານຮັບຮອງຄວາມສາມາດທາງພາສາອັງກິດ (TOEFL, TOEIC, IELTS) (ຖ້າມີ)

**ໝາຍເຫດ:** *ສຳລັບເອກະສານຕິດຄັດ ຂໍ້ 1 ແມ່ນ ຕ້ອງສົ່ງ (ສະບັບແທ້ + ສຳເນົາ) ໄປສະຖານທູດ ແລະ ສຳເນົາອີກສະບັບໜຶ່ງ ສົ່ງໃຫ້ JAOL*

**ສອບຖາມຂໍ້ມູນ:**

*ໂທ: 030-5746-744*

*ໂທ: 020-2981-5248*

*ອີເມວ : info@jaol.org*

**ສະມາຄົມອະດີດນັກສຶກສາລາວຈາກຍີ່ປຸ່ນ**

ກະຊວງສຶກສາທິການ ແລະ ກິລາ ຕຶກເຂດສະໜາມກິລາເຈົ້າອານຸວົງ ສູນປະກັນຄຸນະພາບ ຫ້ອງ 106

ເບີໂທ: 0305746744; ອີເມລ: info@jaol.org; ເວັບໄຊ: www.jaol.org